# ທະນາຄານແຫ່ງ ສປປ ລາວ
# ຢືນຢັນຈະຮັກສາການແຂງຄ່າຂອງເງິນກີບໃຫ້ໝັ້ນທ່ຽງ

ທະນາຄານ ແຫ່ງ ສປປ ລາວ ໄດ້ຢືນຢັນເຖິງນະໂຍບາຍຮັກສາການແຂງຄ່າຂອງເງິນກີບໄວ້ວ່າ: ຜ່ານມາເຖິງວ່າຈະມີການຮຽກຮ້ອງໃຫ້ຫຼຸດຄ່າເງິນກີບລົງ ແຕ່ທາງທະນາຄານຍັງຈະຮັກສາໄວ້ຄືເກົ່າ ໂດຍໄດ້ກຳນົດອັດຕາລອຍໂຕຂອງເງິນກີບຢູ່ໃນລະດັບ 2% ຖ້າທຽບໃສ່ສະກຸນເງິນໂດລາສະຫະລັດ ຫລື ເງິນບາດໄທ.

ທ່ານ ພູເພັດ ຄຳພູນວົງ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ຊີ້ແຈງວ່າ: ການຫລຸດລາຄາເງິນກີບຈະເຮັດໃຫ້ ມີຜົນລົບຫລາຍກ່ວາຜົນບວກ ເຊິ່ງອາດຈະນຳໄປສູ່ໄພເງິນເຟີ້ຂອງເງິນກີບກໍ່ເປັນໄດ້ ແລະ ອາດຈະເຮັດໃຫ້ອັດຕາການແລກປ່ຽນທະວີຂຶ້ນ ແລະ ເຮັດໃຫ້ສະກຸນເງິນຂອງຊາດຂາດຄວາມເຊື່ອຖື ແລະ ຈະເຮັດໃຫ້ຄືນຫັນໄປສະສົມສະກຸນເງິນຕາອື່ນໝົດແທນ, ໃນຂະນະປະຈຸບັນລັດຖະບານເຮົາ ໄດ້ມີນະໂຍບາຍສົ່ງເສີມໃຫ້ປະຊາຊົນນຳໃຊ້ສະກຸນເງິນຂອງຊາດໃຫ້ຫຼາຍຂຶ້ນແຕ່ຖ້າວ່າເງິນກີບອ່ອນຄ່າລົງ ກໍ່ຈະຂັດກັບຜົນປະໂຫຍດລວມຂອງຊາດ ແລະ ກົງກັນຂ້າມເງິນກີບຈະມີຄວາມໝັ້ນທ່ຽງ ກໍ່ຈະເປັນປັດໃຈສຳຄັນໃນການຄ້ຳປະກັນການເຕີບໃຫຍ່ເຂັ້ມແຂງຂອງເສດຖະກິດ.

ຜູ້ປະກອບການສົ່ງອອກສິນຄ້າຫຼາຍບໍລິສັດຕ້ອງການໃຫ້ເງິນກີບອ່ອນຄ່າລົງເລັກໜ້ອຍເພື່ອການຢູ່ຫຼອດໃນໄລຍະການຖົດຖອຍຂອງເສດຖະກິດໂລກພວກເພິ່ນໃຫ້ເຫດຜົນວ່າ: ຍ້ອນບໍ່ສາມາດແບກຫາບຕົ້ນທຶນການຜະລິດທີ່ເພີ່ມຂຶ້ນ, ຜູ້ສົ່ງອອກເຫຼົ່ານັ້ນສ່ວນຫຼາຍເຂົາເຈົ້າມີລາຍຮັບເງິນຕາຕ່າງປະເທດ, ແຕ່ຕ້ອງມາຈ່າຍກິດຈະການ ແລະ ໃຊ້ຈ່າຍອື່ນໆຢູ່ພາຍໃນເປັນເງິນກີບ ແລະ ພວກເຂົາກໍ່ເຫັນເຫດຜົນພຽງພໍວ່າ: ຖ້າເງິນກີບອ່ອນໂຕຕົນກໍ່ຈະມີທ່າດີກ່ວາໃນການນຳເອົາເງິນໂດລາມາໃຊ້ຈ່າຍ. ແຕ່ທາງທະນາຄານ ແຫ່ງ ສປປ ລາວ ໃຫ້ທັດສະນະວ່າ: ບົດຮຽນໄດ້ພິສູດໃຫ້ເຫັນແລ້ວດັ່ງການຫຼຸດຄ່າເງິນດົງຂອງຫວຽດນາມເມື່ອຜ່ານມານັ້ນກໍ່ບໍ່ໄດ້ໄປສູ່ການສົ່ງເສີມການສົ່ງອອກ ຄືດັ່ງຫຼາຍຄົນໄດ້ກ່າວຄຳອ້າງອີງ, ພະນັກງານອາວຸໂສຂອງທະນາຄານ ທ່ານໜຶ່ງໃຫ້ຄຳຢືນຢັນວ່າ: ເສດຖະກິດຂອງລາວຕ່າງກັບລະບົບເສດຖະກິດຂອງ ຫວຽດນາມ, ໄທ ຫຼື ປະເທດອື່ນໆ. ເວົ້າລວມແລ້ວແຕ່ລະປະເທດມີລະບົບເສດຖະກິດທີ່ແຕກຕ່າງກັນ ແລະ ມີຈຸດແຂງຈຸດອ່ອນຕ່າງກັນ. ດັ່ງນັ້ນມັນກໍ່ບໍ່ເໝາະສົມທີ່ຈະດຳເນີນມາດຕະການໃດໜຶ່ງທາງດ້ານເງິນຕາຄືດັ່ງປະເທດອື່ນຄືນະໂຍບາຍຂອງຫວຽດນາມໃນການຄຸ້ມຄອງແລກປ່ຽນເງິນຕາມັນກໍ່ອາດຈະແຕກຕ່າງກັນເຮົາເພາະເສດຖະກິດຂອງລາວເຮົາສ່ວນຫຼາຍແມ່ນອາໄສການນຳເຂົ້າ ດັ່ງນັ້ນໃນເມື່ອເງິນກີບແຂງຄ່າເຮົາກໍ່ຈະສາມາດຊື້ສິນຄ້າໄດ້ຫຼາຍຂຶ້ນ.

ທາງທະນາຄານກໍ່ສະແດງຄວາມເຫັນໃຈຕໍ່ຜູ້ສົ່ງອອກທີ່ໄດ້ຮັບຜົນກະທົບແຕ່ມັນເປັນໄປບໍ່ໄດ້ທີ່ຈະຫຼຸດຄ່າເງິນກີບລົງເພາະເຫັນວ່າອັດຕາສ່ວນໃນການສົ່ງອອກຂອງລາວກໍ່ຍັງບໍ່ທັນສູງປານໃດ ໃນການປະກອບສ່ວນເຂົ້າໃນ GDP ຂອງປະເທດ. ດັ່ງນັ້ນທະນາຄານແຫ່ງ ສປປ ລາວ ຈິ່ງຕັດສິນໃຈຮັກສາຄ່າເງິນກີບໃຫ້ແຂງຄ່າດັ່ງເດີມ.

ອ້າງອີງຈາກໜັງສືພິມ ລາວພັດທະນາ ສະບັບວັນທີ 05/02/2010